# ສ້າງຂະບວນການ ແຂ່ງຂັນວຽກງານວິຊາສະເພາະ ( ນັບເງິນດ້ວຍມື ) ເພື່ອຂໍ່ານັບຮັບຕ້ອນໃນວັນຫັນເປັນທຸລະກິດ ຂອງ ທຄຕລ ຄົບຮອບ 27 ປີ




**ໃນວັນເສົາ** ທີ **10 ກັນຍາ 2016** ທີ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສໍານັກງານໃຫຍ່ ໄດ້ມີການຈັດກິດຈະກໍາ **ການແຂ່ງຂັນນັບເງິນດ້ວຍມືປະຈໍາປີ 2016** ເຊິ່ງໄດ້ແບ່ງອອກເປັນ 2 ປະເພດການ ແຂ່ງຂັນຄື: ປະເພດນັບເງິນດ້ວຍຄວາມໄວ ແລະ ປະເພດກວດນັບ ເງິນປອມ - ເງິນປີ້ນ - ເງິນສັບໜ້າ - ເງິນສັບຫຼັງ ໂດຍການເປັນປະທານຂອງຄະນະອໍານວຍການ ທຄຕລ **ທ່ານ ພັນຊະນະ ຄຸນນຸວົງ** ແລະ **ທ່ານ ລາໃຈ ຄັນພຣະວົງ** ພ້ອມດ້ວຍການເຂົ້າຮ່ວມຂອງບັນດາຫົວໜ້າພະແນກ, ສູນ, ສາຂາ ນະຄອນຫຼວງ, ສາຂາ ດົງໂດກ ແລະ ພະນັກງານຂອງ ທຄຕລ ຈໍານວນໜຶ່ງ. ຜູ້ເຂົ້າແຂ່ງຂັນການນັບເງິນດ້ວຍມືມີທັງໝົດ 39 ທ່ານ ຍິງ 5 ທ່ານ, ໃນນັ້ນແບ່ງອອກເປັນປະເພດນັບດ້ວຍຄວາມໄວ 19 ທ່ານ, ຍິງ 1 ທ່ານ ແລະ ປະເພດກວດນັບ ເງິນປອມ - ເງິນປີ້ນ - ເງິນສັບໜ້າ - ເງິນສັບຫຼັງ 20 ທ່ານ, ຍິງ 4 ທ່ານ.



**ສະຫຼຸບຜົນຂອງການແຂ່ງຂັນການນັບເງິນດ້ວຍມື:**

- ປະເພດນັບດ້ວຍຄວາມໄວ:
  - ອັນດັບທີ 1 : ທ້າວ ຄຽນສີ ອຸດທະຈັກ ຈາກ ສາຂາຄົງໂດກ
  - ອັນດັບທີ 2 :ທ້າວ ຈັນທີ ທຸ່ມມຸນຕີ ຈາກ ພະແນກຄັງສາງ ສໍານັກງານໃຫຍ່
  - ອັນດັບທີ 3 : ທ້າວ ພູນຮຽງ ພົງທະວີໄຊ ຈາກ ສາຂານະຄອນຫຼວງ
- ປະເພດກວດນັບ ເງິນປອມ - ເງິນປີ້ນ - ເງິນສັບໜ້າ - ເງິນສັບຫຼັງ:
  - ອັນດັບທີ 1 : ນາງ ທິບມີນາ ຄໍາເພັງໄຊ ຈາກ ພະແນກຄັງສາງ ສໍານັກງານໃຫຍ່
  - ອັນດັບທີ 2 : ທ້າວ ວອນວິໄລ ຈັນບົວທັນ ຈາກ ພະແນກຄັງສາງ ສໍານັກງານໃຫຍ່
  - ອັນດັບທີ 3 : ທ້າວ ພອນພະສຸກ ສີວັນນະລິດ ຈາກ ພະແນກຄັງສາງ ສໍານັກງານໃຫຍ່

ການແຂ່ງຂັນນັບເງິນດ້ວຍມື ໄດ້ດໍາເນີນໄປດ້ວຍຄວາມມ່ວນຊື່ນ, ຟົດຟື້ນຈາກບັນດາກອງເຊຍ ແລະ ຜູ້ເຂົ້າແຂ່ງຂັນ ສ້າງຄວາມສາມັກຄີພາຍໃນໃຫ້ແໜ້ນແຟ້ນຍິ່ງຂຶ້ນ ແລະ ເປັນການຝຶກຝົນທັກສະທາງດ້ານວິຊາສະເພາະໃຫ້ແກ່ພະນັກງານຜູ້ເຂົ້າແຂ່ງຂັນ. ກິດຈະກໍາດັ່ງກ່າວໄດ້ບັນລຸຈຸດປະສົງ ແລະ ໄດ້ສິ້ນສຸດລົງໃນເວລາ 11 : 25 ໂມງ ໃນວັນດຽວກັນ.






**ພາບ ແລະ ຂຽນຂ່າວໂດຍ: ທ້າວ ສຸລິຍົງ ສຸກຈັນດີ**